ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0644/ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 11. ມິຖຸນາ 2019

# ຂໍ້ຕົກລົງ

## ວ່າດ້ວຍການປະກາດໃຊ້ລະບຽບແຫຼ່ງກຳເນີດສິນຄ້າ ພາຍໃຕ້ສັນຍາເຂດການຄ້າເສລີ ອາຊຽນ - ຮົງກົງ, ສປ ຈີນ

- ອີງຕາມ ລັດຖະດຳລັດຂອງປະທານປະເທດສາທາລະນະລັດປະຊາທິປະໄຕປະຊາຊົນລາວ ວ່າດ້ວຍການປະກາດໃຫ້ສັດຕະຍາບັນແກ່ສັນຍາເຂດການຄ້າເສລີລະຫວ່າງ ອາຊຽນ - ຮົງກົງ, ສປ ຈີນ ແລະ ສັນຍາການລົງທຶນ ລະຫວ່າງ ອາຊຽນ - ຮົງກົງ, ສປ ຈີນ ສະບັບເລກທີ 174/ປປທ, ລົງວັນທີ 01 ມີນາ 2019;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ, ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010;
- ອີງຕາມ ໜັງສືຈາກ ກອງເລຂາອາຊຽນ ສະບັບເລກທີ 136/2019, ລົງວັນທີ 10 ພຶດສະພາ 2019;
- ອີງຕາມ ການສະເໜີຂອງ ກົມການນຳເຂົ້າ ແລະ ສົ່ງອອກ.

ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

**ມາດຕາ 1.** ປະກາດໃຊ້ລະບຽບແຫຼ່ງກຳເນີດສິນຄ້າ (Rules of Origin: ROO) ພາຍໃຕ້ສັນຍາເຂດການຄ້າເສລີ ອາຊຽນ - ຮົງກົງ, ສປ ຈີນ (ASEAN - Hongkong Free Trade Area: AHKFTA) ຊຶ່ງລວມທັງຂັ້ນຕອນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (Operational Certification Procedures: OCP), ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ຟອມ AHK) ແລະ ລະບຽບສະເພາະຜະລິດຕະພັນ (Product Specific Rules: PSR).

**ມາດຕາ 2.** ການໄດ້ຮັບສິດທິພິເສດທາງການຄ້າພາຍໃຕ້ຂອບສັນຍາ AHKFTA ຕ້ອງມີໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຫຼື ຟອມ AHK ໄປແຈ້ງຕໍ່ເຈົ້າໜ້າທີ່ພາສີຂອງປະເທດປາຍທາງ ທີ່ເປັນສະມາຊິກ. ສຳລັບສິນຄ້າທີ່ຈະ

ໄດ້ຮັບສິດທິພິເສດໃນການນຳໃຊ້ຟອມ AHK ໄດ້ກໍຕໍ່ເມື່ອສິນຄ້ານັ້ນສາມາດບັນລຸເງື່ອນໄຂແຫຼ່ງກຳເນີດສິນຄ້າທີ່ໄດ້ລະບຸໃນສັນຍານີ້ ຄື:

2.1 ສິນຄ້າທີ່ໄດ້ມາ ຫຼື ຜະລິດຂຶ້ນໂດຍນຳໃຊ້ວັດຖຸດິບພາຍໃນ ສປປ ລາວ ທັງໝົດ (Wholly Obtained: WO) ໝາຍເຖິງປະເພດສິນຄ້າທີ່ສາມາດກຳນົດແຫຼ່ງທີ່ມາໄດ້ຢ່າງງ່າຍດາຍຕາມຄຸນລັກສະນະທຳມະຊາດຂອງຕົວສິນຄ້າ ໂດຍສ່ວນໃຫຍ່ແມ່ນ ສິນຄ້າຈຳພວກກະສິກຳ, ແຮ່ທາດ, ເຄື່ອງປ່າຂອງດົງ ແລະ ອື່ນໆ; ຊຶ່ງສິນຄ້າທີ່ກ່າວມານີ້ແມ່ນ ຈະຖືວ່າໄດ້ເງື່ອນໄຂແຫຼ່ງກຳເນີດສິນຄ້າໂດຍອັດຕະໂນມັດ;

2.2 ສິນຄ້າທີ່ ຫຼື ຜະລິດຂຶ້ນໂດຍບໍ່ໄດ້ນຳໃຊ້ວັດຖຸດິບພາຍໃນ ສປປ ລາວ ທັງໝົດ ແມ່ນສິນຄ້າທີ່ຜະລິດຂຶ້ນໂດຍການນຳໃຊ້ວັດຖຸດິບ ຫຼື ວັດສະດຸນຳເຂົ້າຈາກຕ່າງປະເທດ ຫຼື ຈາກແຫຼ່ງທີ່ບໍ່ສາມາດກຳນົດໄດ້ອາດຈະທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ. ສິນຄ້າເຫຼົ່ານີ້ຈະຖືວ່າເປັນສິນຄ້າທີ່ໄດ້ແຫຼ່ງກຳເນີດກໍ່ຕໍ່ເມື່ອໄດ້ຜ່ານຂະບວນການຜະລິດຢ່າງຫຼວງຫຼາຍ. ສຳລັບເງື່ອນໄຂສິນຄ້າທີ່ຜ່ານການຜະລິດຢ່າງຫຼວງຫຼາຍພາຍໃຕ້ຂອບສັນຍາ AHKFTA ແບ່ງອອກເປັນ 02 ລະບຽບຄື: ລະບຽບແຫຼ່ງກຳເນີດສິນຄ້າແບບທົ່ວໄປ (General Rule: GR) ແລະ ລະບຽບແຫຼ່ງກຳເນີດສິນຄ້າສະເພາະຜະລິດຕະພັນ (Product Specific: PSR). ໃນນັ້ນ, ລະບຽບ GR ແມ່ນ ມີ 02 ເງື່ອນໄຂຄື: ການສ້າງມູນຄ່າພາຍໃນກຸ່ມອາຊຽນ - ຮົງກົງ, ສປ ຈີນ ບໍ່ຫຼຸດ 40% (Regional Value Content: RVC 40%) ຫຼື ການປ່ຽນເລກລະຫັດພາສີໃນລະດັບ 04 ຕົວເລກ ຫຼື ລະຫັດເຄົ້າ (Change in Tariff Heading: CTH). ສຳລັບລາຍການສິນຄ້າໃນ PSR ໝາຍຄວາມວ່າ ຖ້າຫາກສິນຄ້າໃດທີ່ໄດ້ລະບຸຢູ່ໃນຕາຕະລາງ PSR ແມ່ນຈະຕ້ອງປະຕິບັດລະບຽບແຫຼ່ງກຳເນີດສິນຄ້າທີ່ໄດ້ກຳນົດໄວ້ໃນຕາຕະລາງນີ້ເທົ່ານັ້ນ.

**ມາດຕາ 3.** ມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ແລະ ແຂວງ ໃນຂອບເຂດທົ່ວປະເທດ ແລະ ເຂດເສດຖະກິດພິເສດ ເປັນຜູ້ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າໃນຂອບສັນຍາ AHKFTA ຫຼື ພາກສ່ວນອື່ນທີ່ຖືກມອບໝາຍໃຫ້.

**ມາດຕາ 4.** ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ຮັບຜິດຊອບແນະນຳ ແລະ ເຜີຍແຜ່ວິທີຈັດຕັ້ງປະຕິບັດລະອຽດກ່ຽວກັບ ລະບຽບດັ່ງກ່າວ ເພື່ອໃຫ້ຂໍ້ຕົກລົງສະບັບນີ້ຖືກປະຕິບັດຢ່າງໄດ້ຮັບຜົນດີ.

**ມາດຕາ 5.** ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ວັນທີ **11 ມິຖຸນາ 2019** ເປັນຕົ້ນໄປ.

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ